ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ

ເລກທີ 174 /ສວສ

ນະຄອນຫຼວງວຽງຈັນ, ວັນທີ 28 NOV 2024

# ໜັງສືແຈ້ງການ

ເຖິງ: ຜູ້ທີ່ສົນໃນຕ້ອງການສະໝັກສອບເສັງລະດັບຊາດ ສໍາລັບວິຊາຊີບເພສັດຊະກໍາ ຄັ້ງທີ່ 1

ເລື່ອງ: ຂັ້ນຕອນການສະໝັກສອບເສັງລະດັບຊາດ ສໍາລັບວິຊາຊີບເພສັດຊະກໍາ ຄັ້ງທີ່ 1

- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ສະບັບ ເລກທີ 1932/ສທ, ລົງວັນທີ 17 ກໍລະກົດ 2024;
- ອີງຕາມ ວ່າດ້ວຍການອະນຸມັດຈັດຕັ້ງການສອບເສັງລະດັບຊາດສໍາລັບວິຊາຊີບເພສັດຊະກໍາ ສະບັບເລກທີ 166/ ສວສ, ລົງວັນທີ 20 ພະຈິກ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການສອບເສັງລະດັບຊາດ ສໍາລັບເພສັຊກອນ ສະບັບເລກ ທີ 169/ສວສ, ລົງວັນທີ 26 ພະຈິກ 2024;

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ວ່າ: ສະພາຄຸ້ມຄອງວິຊາຊີບ ເພສັດຊະກໍາ ຈະໄດ້ຈັດການສອບເສັງລະດັບຊາດ ສໍາລັບເພສັຊກອນ ຄັ້ງທີ 1 ຂຶ້ນ ໃນວັນທີ 24 ເດືອນ ທັນວາ ປີ 2024 ຢູ່ທີ່ ຄະນະເພສັຊສາດ, ມະຫາວິທະຍາໄລ ວິທະຍາສາດສຸຂະພາບ (ມວສ). ດັ່ງນັ້ນ, ຈຶ່ງຂໍແຈ້ງໃຫ້ຜູ້ທີ່ຮຽນຈົບ ເພສັຊສາດ ທັງພາຍໃນ ແລະ ຕ່າງປະເທດ ທີ່ຮຽນຈົບ ແຕ່ປີ 2024 ເປັນຕົ້ນມາ ທີ່ຍັງບໍ່ທັນໄດ້ສອບເສັງ ແລະ ຮັບໃບ ປະກອບວິຊາຊີບເພສັດຊະກໍາ ໃຫ້ສະໝັກສອບເສັງ ແລະ ປະຕິບັດຕາມຂັ້ນຕອນລາຍລະອຽດ ດັ່ງລຸ່ມນີ້:

1. ສະໝັກສອບເສັງດ້ວຍການດາວໂຫຼດ ແບບຟອມຄໍາຮ້ອງຜ່ານທາງອອນລາຍ ໄດ້ທີ່: https://hpc.gov.la/la/pharmacist/examination ຫຼື ພົວພັນເອົາແບບຟອມສະໝັກໄດ້ ທີ່ ຫ້ອງການ ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ (ຕຶກສອງຊັ້ນຕໍ່ໜ້າ ຕຶກໃໝ່ 6 ຊັ້ນຂອງກະຊວງສາທາລະນະສຸກ);
2. ຜູ້ທີ່ສະໝັກສອບເສັງຈະຕ້ອງຂຽນຟອມສະໝັກສອບເສັງ ແລະ ລົງທະບຽນທາງອອນລາຍ ຜ່ານ QR Code (ຖ້າບໍ່ລົງທະບຽນ ຈະບໍ່ມີລາຍຊື່ສອບເສັງ);

3. ສົ່ງແບບຟອມຄຳຮ້ອງສະໝັກສອບເສັງ ແຕ່ ວັນທີ 03 ຫາ 17 ເດືອນ ທັນວາ ປີ 2024 ທີ່ ຫ້ອງການສະພາຄຸ້ມຄອງວິຊາຊີບສາທາລະນະສຸກ (ຕຶກສອງຊັ້ນຕໍ່ໜ້າ ຕຶກໃໝ່ 6 ຊັ້ນຂອງກະຊວງສາທາລະນະສຸກ);
4. ໃຫ້ມາຮັບ ບັດເຂົ້າຫ້ອງສອບເສັງ ແຕ່ວັນທີ່ 19 ຫາ 23 ເດືອນ ທັນວາ ປີ2024 ທີ່ຫ້ອງການສະພາຄຸ້ມຄອງວິຊາຊີບສາທາລະນະສຸກ (ຕຶກສອງຊັ້ນຕໍ່ໜ້າ ຕຶກໃໝ່ 6 ຊັ້ນຂອງກະຊວງສາທາລະນະສຸກ);
5. ຄ່າລົງທະບຽນສະໝັກສອບເສັງ ຈຳນວນ 350,000 ກີບ/ຄົນ ເຊິ່ງຈະຕ້ອງຈ່າຍພ້ອມ ຕອນສົ່ງຟອມຄຳຮ້ອງສະໝັກສອບເສັງ;
6. ຜູ້ສອບເສັງ ຈະຕ້ອງກະກຽມອຸປະກອນໃນການສອບເສັງດ້ວຍຕົນເອງມາເຂົ້າຫ້ອງສອບເສັງ ເຊັ່ນ: ສໍດຳ 2B, ຢາງລຶບ, ອຸປະກອນແຫຼມສໍ ແລະ ຈັກຄິດໄລ່.

ເຊັນແທນ ປະທານ

ສະພາຄຸ້ມຄອງວິຊາຊີບສາທາລະນະສຸກ

ສຈ ດຣ ຈັນເພັງ ທຳມະວົງ

ສາມາດຕິດຕໍ່ປະສານງານ ໂທ ແລະ ວອດແອັບ:

1. ນ. ວົງເດືອນ ສະຫວັນສັກ 020 9662 4956
2. ດຣ. ເລກ ສີດາວົງ 020 5500 8875
3. ທ. ບຸນປະສິດ ຄຳກອງ 020 5986 8071